# ພະຍາດໂບທູລີຊຶມ (Botulism)

ໂບທູລີຊຶມແມ່ນພະຍາດທີ່ຮ້າຍແຮງທີ່ເຮັດໃຫ້ກ້າມເນື້ອລ່ອຍ. ພະຍາດນີ້ເກີດຈາກແບັກແທເລຍ. ພະຍາດນີ້ແບ່ງອອກເປັນ 3 ຊະນິດ:

- ໂບທູລີຊຶມໃນອາຫານເປັນພິດ
- ໂບທູລີຊຶມແອນ້ອຍ, ແລະ
- ໂບທູລີຊຶມໃນບາດແຜ.

## ຂ້າພະເຈົ້າສາມາດເປັນໂບທູລີຊຶມໃນອາຫານໄດ້ແນວໃດ?

ທ່ານຈະເປັນ, ຖ້າທ່ານກິນອາຫານທີ່ຕິດເຊື້ອແລ້ວ. ຄົນສ່ວນຫລາຍມີອາການພາຍໃນ 12 – 36 ຊົ່ວໂມງ. ໃນບາງກໍລະນີອາດຈະໃຊ້ເວລາ 2 ອາທິດຈຶ່ງມີອາການ.

ຖ້າຫລາຍຄົນກິນອາຫານແບບດຽວກັນນັ້ນ ຫາກບໍ່ສະບາຍ, ນັ້ນກໍສະແດງວ່າອາຫານນັ້ນອາດຈະຕິດເຊື້ອດັ່ງກ່າວ. ໃນກໍລະນີແບບນີ້, ເຈົ້າຫນ້າທີ່ສາທາລະນະສຸກຈະລົງກວດກາເຫດການ. ອາດເປັນໄປໄດ້ທີ່ຜູ້ກໍ່ການຮ້າຍໄດ້ເອົາເຊື້ອຈຸລິນຊີເຫລົ່ານີ້ໃສ່ໃນອາຫານ.

## ຜູ້ໃດອາດຈະເປັນໂບທູລີຊຶມແອນ້ອຍ?

ພວກແອນ້ອຍ, ໂດຍສະເພາະອາຍຸ 6 ເດືອນ ຫລືຕ່ຳກວ່ານັ້ນ ສາມາດເປັນພະຍາດນີ້ຈາກອາຫານທີ່ຕິດເຊື້ອແລ້ວ ຫລືຈາກຂີ້ຝຸ່ນໄດ້. ແອນ້ອຍທີ່ບໍ່ໄດ້ກິນນົມແມ່ແລະແອນ້ອຍທີ່ກິນນ້ຳເຜີ້ງມີໂອກາດຫລາຍກວ່າທີ່ຈະເປັນພະຍາດໂບທູລີຊຶມແອນ້ອຍ.

## ຂ້າພະເຈົ້າສາມາດເປັນໂບທູລີຊຶມໃນບາດແຜໄດ້ແນວໃດ?

ທ່ານສາມາດເປັນພະຍາດນີ້ໄດ້, ຖ້າຫາກແບັກແທເລຍຖືກບາດແຜ ຫລື ຮອຍບາດທີ່ບໍ່ໄດ້ປົກໄວ້.

## ພະຍາດໂບທູລີຊຶມແມ່ນພະຍາດທີ່ຕິດຕໍ່ບໍ?

ບໍ່. ທ່ານບໍ່ສາມາດຕິດພະຍາດນີ້ຈາກຄົນອື່ນ.

## ຂ້າພະເຈົ້າສາມາດປ້ອງກັນບໍ່ໃຫ້ຕິດພະຍາດໂບທູລີຊຶມໄດ້ແນວໃດ?

ສ່ວນຫລາຍ, ທ່ານສາມາດປ້ອງກັນບໍ່ໃຫ້ຕິດພະຍາດໂບທູລີຊຶມໂດຍເຮັດສິ່ງຕໍ່ໄປນີ້:

- ຫລີກລ້ຽງອາຫານກະປ໋ອງທີ່ອັດບໍ່ແຈບ ຫລື ອາຫານບູດເນົ່າ
- ລ້າງບາດແຜໃຫ້ສະອາດ, ແລະ
- ບໍ່ເອົານ້ຳເຜີ້ງໃຫ້ແອນ້ອຍກິນ.

## ອາການຂອງພະຍາດໂບທູລີຊຶມເປັນແນວໃດ?

ທ່ານອາດຈະມີ:

- ບັນຫາກັບສາຍຕາເຊັ່ນ ເບິ່ງເຫັນເປັນເງົາຊ້ອນຫລືສາຍຕາມົວ ແລະ ຫນັງຕາຍານລົງ,
- ເວົ້າລົວ,
- ກືນນ້ຳລາຍຍາກ, ປາກແຫ້ງ, ແລະ
- ກ້າມເນື້ອເລີ່ມອ່ອນເພຍຕັ້ງແຕ່ບ່າຫລືກົກແຂນ ແລ້ວລົງໄປຕາມຮ່າງກາຍ.
- ກ້າມເນື້ອລະບົບຫາຍໃຈລ່ອຍ. ທ່ານອາດຈະເຊົາຫາຍໃຈແລະເຖິງແກ່ຊີວິດ.

## ຂ້າພະເຈົ້າສາມາດຕາຍຍ້ອນພະຍາດໂບທູລີຊຶມບໍ?

ແມ່ນ. ທ່ານອາດເຊົາຫາຍໃຈແລະເຖິງແກ່ຊີວິດໄດ້, ຖ້າບໍ່ໄດ້ຮັບຄວາມ ຊ່ວຍເຫລືອໂດຍທັນທີ.

ທ່ານອາດມີອາການດີຂຶ້ນ ຖ້າໄດ້ຮັບຄວາມຊ່ວຍເຫລືອໂດຍທັນທີ. ຖ້າປອດຂອງທ່ານເຊົາເຮັດວຽກ, ຈຳເປັນຕ້ອງໄດ້ໃຊ້ເຄື່ອງຊ່ວຍຫາຍໃຈເພື່ອຈະຫາຍໃຈໄດ້. ມັນອາດໃຊ້ເວລາຫລາຍອາທິດ ຫລືຫລາຍເດືອນກວ່າຈະຟື້ນຄືນເປັນປົກກະຕິ.

## ຈະເຮັດແນວໃດ ຖ້າຂ້າພະເຈົ້າຄິດວ່າຂ້າພະເຈົ້າຕິດພະຍາດໂບທູລີຊຶມ?



ຂໍໃຫ້ຕິດຕໍ່ກັບທ່ານໝໍປະຈຳຄອບຄົວຫລືໂຮງໝໍ ***ທັນທີ.*** ທ່ານອາດຈະໄດ້ຮັບຢາສະເພາະ. ຢານັ້ນອາດຈະບັນເທົາ ອາການ ຖ້າທ່ານກິນຢານັ້ນທັນທີ.

## ສຳລັບຂໍ້ມູນເພີ່ມເຕີມຂໍໃຫ້ຕິດຕໍ່ ...

ໂທຫາ CDC (Centers for Disease Control) ສຳລັບຂໍ້ມູນທີ່ເປັນພາສາອັງກິດ:

800-CDC-INFO (800-232-4636)
888-232-6348 (TTY)

ຫລືເຂົ້າໄປ: www.bt.cdc.gov/agent/botulism
www.dhs.ca.gov/epo